**ວັນສຸກສັກສິດ**
**ມະຫາທໍລະມານຂອງພຣະເຢຊູເຈົ້າ**
**ວັນທີ 10 ເມສາ 2020**



**ບົດອ່ານຈາກຈົດໝາຍ ຂຽນເຖິງຊາວເຮເບີຣ 4, 14-16; 5, 7-9**

ພີ່ນ້ອງທີ່ຮັກ, ຍ້ອນວ່າ ພວກເຮົາມີມະຫາສົງ ຜູ້ຍິ່ງໃຫຍ່ ຜູ້ໄດ້ຜ່ານສະຫວັນ ຊັ້ນຟ້າແລ້ວ, ນັ້ນຄື ພຣະເຢຊູ ພຣະບຸດຂອງພຣະເຈົ້າ. ພວກເຮົາຈົ່ງຕັ້ງໝັ້ນ ໃນການສຳແດງຄວາມເຊື່ອເຖີດ. ເຫດວ່າ ພວກເຮົາບໍ່ມີມະຫາສົງ ທີ່ບໍ່ສາມາດເວດທະນາ ນຳຄວາມອ່ອນແອ ຂອງພວກເຮົາ; ແຕ່ພຣະອົງໄດ້ຜ່ານການທົດລອງ ໃນທຸກຢ່າງມາແລ້ວ ຕາມທຳນອງດຽວກັນ ກັບພວກເຮົາ, ເວັ້ນເສຍແຕ່ການບາບ. ດັ່ງນີ້ ພວກເຮົາຈົ່ງແນ່ໃຈ ກ້າວສູ່ພະທີ່ນັ່ງ ແຫ່ງພຣະຄຸນ ເພື່ອຈະໄດ້ຮັບພຣະເມດຕາກະລຸນາ ແລະຈະໄດ້ພົບພຣະຄຸນມາຊ່ວຍເຫລືອ ໃນເວລາອັນເໝາະສົມ.

ພຣະອົງນີ້ແຫລະ ໃນເວລາຈຳເລີນຊີວິດ ເປັນມະນຸດ ໄດ້ຂາບໄຫວ້ ວອນຂໍ ຕໍ່ພຣະຜູ້ຊົງສາມາດຈະຊ່ວຍ ໃຫ້ພົ້ນຄວາມຕາຍໄດ້ ດ້ວຍສຽງດັງແລະນ້ຳຕາ, ແລະກໍໄດ້ສົມປາດຖະໜາ ຍ້ອນເຫັນແກ່ ຄວາມເຄົາລົບຢຳເກງຂອງພຣະອົງ. ແມ່ນວ່າ ພຣະອົງຊົງເປັນພຣະບຸດເຈົ້າແທ້ ກໍຍັງຍອມຮຽນເອົາຄວາມນົບນອບ ຈາກການທົນທຸກທໍລະມານ ທີ່ພຣະອົງໄດ້ຮັບ. ແລະເມື່ອພຣະອົງ ໄດ້ຊົງພຽບພ້ອມບໍລິບູນແລ້ວ ກໍກາຍເປັນບໍ່ເກີດແຫ່ງຄວາມຣອດນິລັນດອນ ແກ່ທຸກຄົນ ທີ່ເຊື່ອຟັງພຣະອົງ.

ນີ້ແມ່ນວາຈາຂອງພຣະເປັນເຈົ້າ

**ບົດແບ່ງປັນ**

ວັນສຸກສັກສິດແມ່ນວັນດຽວໃນປີພິທີກຳ ທີ່ພວກເຮົາບໍ່ເຫັນຮູບພາບສັກສິດອື່ນໃນວັດ, ນອກຈາກ ໄມ້ກາງເຂນ. ຍ້ອນວ່າ, ເປັນວັນທີ່ພະກຣິສຕະຈັກເຊີນຊວນພວກເຮົາ ໃຫ້ເພັ່ງຊົມໄມ້ກາງເຂນຂອງພະເຢຊູເຈົ້າ ຊຶ່ງສະແດງອອກເຖິງ: ຄວາມຮັກ, ຄວາມຫວັງ, ແລະຄວາມຮອດຂອງມວນມະນຸດ.

- **ຄວາມຮັກ:** ຍ້ອນພະບິດາເຈົ້າໄດ້ຮັກມະນຸດຫລາຍ ຈຶ່ງໄດ້ປະທານລູກຊາຍດຽວຂອງພະອົງໃຫ້ມະນຸດ. ເພື່ອພະບຸດຂອງພະອົງ ຈະໄດ້ໄຖ່ພວກເຮົາອອກຈາກການບາບ. ດ້ວຍອາໄສຄວາມຕາຍຂອງພະອົງ.

- **ຄວາມຫວັງ:** ເພາະພວກເຮົາຫວັງວ່າ: ຖ້າພວກເຮົາຮ່ວມທຸກທໍລະມານນຳພະອົງ, ນຳພະອົງ ພວກເຮົາຈະໄດ້ຮອດ. ຖ້າພວກເຮົາຮ່ວມຕາຍນຳພະອົງ, ນຳພະອົງ ພວກເຮົາຈະມີຊີວິດ.

- **ຄວາມຮອດ:** ອາໄສການຕາຍຂອງພະເຢຊູເຈົ້າ, ພະອົງໄດ້ນຳເອົາພະຄຸນແຫ່ງການໄຖ່ກູ້ມາໃຫ້ພວກເຮົາ. ເພາະນ້ຳແລະເລືອດທີ່ໄຫລອອກຈາກພະສີຂ້າງຂອງພະອົງ ໄດ້ຊຳລະລ້າງພວກເຮົາໃຫ້ບໍລິສຸດ, ແລະເລືອດຂອງພະອົງໄດ້ເປັນອາຫານ ເພື່ອປະທານຊີວິດນິລັນດອນໃຫ້ພວກເຮົາ.

ຂໍໃຫ້ວັນສຸກສັກສິດນີ້ເປັນວັນທີ່ພວກເຮົາໄດ້ສຳນຶກເຖິງບາບຜິດຕ່າງໆທີ່ພວກເຮົາໄດ້ທຳໃຫ້ພະເຢຊູເຈົ້າຕ້ອງຕາຍ ແລະໃນເວລາດຽວກັນກໍໃຫ້ພວກເຮົາເປີດໃຈຂອງຕົນເພື່ອຮັບເອົາພະຄຸນແຫ່ງການໃຫ້ອະໄພທີ່ມາຈາກກາງເຂນຂອງພະເຢຊູເຈົ້າ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ